**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2823 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 11 ພະຈິກ 2025

# ແຈ້ງການ

**ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;**

**- ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ, ເຂດເສດຖະກິດພິເສດ;**

**- ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ.**

**ເລື່ອງ: ບັນຊີປະເພດທຸລະກິດມີເງື່ອນໄຂ ສຳລັບຜູ້ລົງທຶນຕ່າງປະເທດ.**

- ອີງຕາມ ກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງວິສາຫະກິດ ສະບັບເລກທີ 0111/ກຄວ, ລົງວັນທີ 28 ກໍລະກົດ 2025.

ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ກ່ຽວກັບບັນຊີປະເພດທຸລະກິດມີເງື່ອນໄຂ ສຳລັບຜູ້ລົງທຶນຕ່າງປະເທດ ດັ່ງນີ້:

1. ບັນຊີປະເພດທຸລະກິດທີ່ມີເງື່ອນໄຂ ສຳລັບຜູ້ລົງທຶນຕ່າງປະເທດ ແມ່ນປະເພດທຸລະກິດ ທີ່ບໍ່ຫ້າມຜູ້ລົງທຶນຕ່າງປະເທດດຳເນີນທຸລະກິດ ແຕ່ໄດ້ກຳນົດເງື່ອນໄຂສະເພາະ ເປັນຕົ້ນ ທຶນຈົດທະບຽນວິສາຫະກິດຕໍ່າສຸດ ຫຼື ສູງສຸດ, ກຳນົດອັດຕາສ່ວນຮຸ້ນ ຂອງຜູ້ລົງທຶນຕ່າງປະເທດໃນວິສາຫະກິດ ແລະ ມີເງື່ອນໄຂຂໍ້ຈຳກັດອື່ນໆ;

2. ບຸກຄົນ ແລະ ນິຕິບຸກຄົນ ທີ່ໄດ້ຮັບໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ຜ່ານມາຫາກບໍ່ສອດຄ່ອງຕາມແຈ້ງການສະບັບນີ້ ຕ້ອງສະເໜີຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ ເພື່ອປ່ຽນແປງປະເພດທຸລະກິດ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;

3. ການຂຶ້ນທະບຽນວິສາຫະກິດ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ໃຫ້ບຸກຄົນ ຫຼື ນິຕິບຸກຄົນທີ່ບໍ່ສອດຄ່ອງຕາມແຈ້ງການສະບັບນີ້ ລ້ວນແລ້ວແຕ່ເປັນໂມຄະ, ຜູ້ທີ່ລະເມີດຕ້ອງຮັບຜິດຊອບຕາມກົດໝາຍ;

4. ບັນຊີປະເພດທຸລະກິດມີເງື່ອນໄຂ ສຳລັບຜູ້ລົງທຶນຕ່າງປະເທດ ໄດ້ຄັດຕິດມາພ້ອມນີ້;

5. ການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຖ້າຫາກຂະແໜງການກ່ຽວຂ້ອງ ມີຈຸດປະສົງ ເພີ່ມ ຫຼື ຫຼຸດບັນຊີປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ ໃຫ້ສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອປັບປຸງປ່ຽນແປງ ໃນແຕ່ລະໄລຍະ;

6. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1327/ອຄ.ທຄວ, ລົງວັນທີ 13 ກໍລະກົດ 2015;

7. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ລັດຖະມົນຕີ**

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ມະໄລທອງ ກົມມະສິດ

# ບັນຊີປະເພດທຸລະກິດມີເງື່ອນໄຂສຳລັບນັກລົງທຶນຕ່າງປະເທດ

ບັນຊີປະເພດທຸລະກິດມີເງື່ອນໄຂ ສຳລັບນັກລົງທຶນຕ່າງປະເທດ ມີດັ່ງນີ້:

| ລຳດັບ | ເລກລະຫັດ ISIC | ປະເພດທຸລະກິດ | ເງື່ອນໄຂ ສຳລັບຜູ້ລົງທຶນຕ່າງປະເທດ | | ນິຕິກຳທີ່ກ່ຽວຂ້ອງ | ພາກສ່ວນ ຮັບຜິດຊອບ |
|---|---|---|---|---|---|---|
| | | | ທຶນຈົດທະບຽນ | ອັດຕາ ສ່ວນ | | |
| **ຂະແໜງອຸດສາຫະກຳ ແລະ ການຄ້າ** | | | | | | |
| 1 | 45101 ຫາ 47990 | ການຄ້າຂາຍຍົກ ແລະ ຂາຍຍ່ອຍ | ທຶນຕ່ຳກວ່າ 10 ຕື້ກີບ, ແຕ່ບໍ່ຫຼຸດ 4 ຕື້ກີບ | 50% | - ຂໍ້ຕົກລົງ ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015. | ກະຊວງອຸດສາຫະກຳ ແລະ ການຄ້າ |
| | | | ທຶນຕ່ຳກວ່າ 20 ຕື້ກີບ ແຕ່ບໍ່ຫຼຸດ 10 ຕື້ກີບ | 70% | | |
| | | | ທຶນ 20 ຕື້ກີບ ຂຶ້ນໄປ | 100% | | |
| **ຂະແໜງໂຍທາທິການ ແລະ ຂົນສົ່ງ** | | | | | | |
| 2 | 49231 | ທຸລະກິດຂົນສົ່ງສິນຄ້າ ລະຫວ່າງ ປະເທດ | | 49% | - ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12 ທັນວາ 2012;<br>- ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດຳເນີນທຸລະກິດຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025;<br>- ອີງໃສ່ຂອບສັນຍາຂອງ ASEAN,AFAS, WTO ໝາຍຄວາມວ່າບັນດາປະເທດທີ່ນອນຢູ່ໃນກອບດັ່ງກ່າວ ຕ້ອງປະຕິບັດຕາມເງື່ອນໄຂ. | ກະຊວງໂຍທາທິການ ແລະ ຂົນສົ່ງ |

| | | | | | | |
|---|---|---|---|---|---|---|
| **ຂະແໜງວັດທະນະທຳ ແລະ ການທ່ອງທ່ຽວ** | | | | | | |
| 3 | 55101 | - ການເຄື່ອນໄຫວທຸລະກິດພັກແຮມ,ທຸລະກິດຫ້ອງເຊົ່າ ແລະ ເຮືອນເຊົ່າທີ່ມີຈຳນວນຫ້ອງນອນ 100 ຫ້ອງຂຶ້ນໄປ; | 500.000 USD ຂຶ້ນໄປ | 100% | - ກົດໝາຍ ວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 63/ສພຊ, ລົງວັນທີ 1 ກໍລະກົດ 2024;<br>- ອີງຕາມຂໍ້ຕົກລົງ ວ່າດ້ວຍສະຖານທີ່ພັກແຮມສະບັບເລກທີ 985/ຖວທ, ລົງວັນທີ 14 ທັນວາ 2021 | ກະຊວງ ວັດທະນະທຳ ແລະ ການທ່ອງທ່ຽວ |
| 4 | 55102 | - ການເຄື່ອນໄຫວທຸລະກິດພັກແຮມ,ທຸລະກິດຫ້ອງເຊົ່າ ແລະ ເຮືອນເຊົ່າທີ່ມີຈຳນວນຫ້ອງນອນ 50-99 ຫ້ອງ;<br>- ການເຄື່ອນໄຫວທຸລະກິດພັກແຮມ,ທຸລະກິດຫ້ອງເຊົ່າ ແລະ ເຮືອນເຊົ່າທີ່ມີຈຳນວນຫ້ອງນອນ 10-49 ຫ້ອງ. | 100.000USD ຂຶ້ນໄປ<br>10.000 USD ຂຶ້ນໄປ | 100% | | |
| 5 | 56111 | ທຸລະກິດຮ້ານອາຫານ | ຂະໜາດ 50-99 ບ່ອນນັ່ງ ຕ້ອງມີທຶນ 50,000 USD ຂຶ້ນໄປ | 100% | - ກົດໝາຍ ວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 63/ສພຊ, ລົງວັນທີ 1 ກໍລະກົດ 2024;<br>- ຂໍ້ຕົກລົງ ວ່າດ້ວຍຮ້ານອາຫານ ສະບັບເລກທີ 986/ຖວທ, ລົງວັນທີ 14 ທັນວາ 2021. | ກະຊວງ ວັດທະນະທຳ ແລະ ການທ່ອງທ່ຽວ |
| **ຂະແໜງທະນາຄານ** | | | | | | |
| 6 | 66123 | ນຳເຂົ້າ - ສົ່ງອອກຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະ ລະຫວ່າງ ປະເທດ (ຄຳແທ່ງ). | ທຶນຈົດທະບຽນ ຢ່າງໜ້ອຍ 20 ຕື້ກີບ. | 100% | – ກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;<br>– ຂໍ້ຕົກລົງ ວ່າດ້ວຍການດຳເນີນທຸລະກິດນຳເຂົ້າ-ສົ່ງອອກຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະ ລະຫວ່າງປະເທດ ສະບັບເລກທີ 461/ທຫລ, ລົງວັນທີ 03 ມິຖຸນາ 2019. | ທະນາຄານ ແຫ່ງ ສປປ ລາວ |
| | | | | | | |

| | | | | | | |
|---|---|---|---|---|---|---|
| 7 | 64191 | ທະນາຄານທຸລະກິດ. | ທຶນຈົດທະບຽນຢ່າງໜ້ອຍ 1,000 ຕື້ກີບ. | 100% | – ກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023;<br>– ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ ສະບັບເລກທີ 42/ທຫລ, ລົງວັນທີ 15 ມັງກອນ 2016. | |
| 8 | 64191 | ສາຂາທະນາຄານທຸລະກິດຕ່າງປະເທດ. | ເງິນລົງທຶນຢ່າງໜ້ອຍ 600 ຕື້ກີບ. | 100% | - ກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023;<br>- ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ ສະບັບເລກທີ 42/ທຫລ, ລົງວັນທີ 15 ມັງກອນ 2016. | |
| 9 | 64999 | ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ. | ທຶນຈົດທະບຽນ ຢ່າງໜ້ອຍ 30 ຕື້ກີບ. | 51% | - ດຳລັດ ວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບປັບປຸງເລກທີ 184/ລບ, ລົງວັນທີ 20 ມິຖຸນາ 2022. | ທະນາຄານ ແຫ່ງ ສປປ ລາວ |
| 10 | 64999 | ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ. | ທຶນຈົດທະບຽນ ຢ່າງໜ້ອຍ 10 ຕື້ກີບ. | 100% | - ດຳລັດ ວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 184/ລບ, ລົງວັນທີ 20 ມິຖຸນາ 2022. | ທະນາຄານ ແຫ່ງ ສປປ ລາວ |
| 11 | 64192 | ທຸລະກິດເຊົ່າສິນເຊື່ອ. | ທຶນຈົດທະບຽນຢ່າງໜ້ອຍ 5 ຕື້ກີບ. | 100% | - ດຳລັດ ວ່າດ້ວຍທຸລະກິດເຊົ່າສິນເຊື່ອ ສະບັບເລກທີ 471/ລບ, ລົງວັນທີ 02 ກໍລະກົດ 2021. | ທະນາຄານ ແຫ່ງ ສປປ ລາວ |
| 12 | 64929 | ບໍລິສັດຄ້ຳປະກັນສິນເຊື່ອ. | ທຶນຈົດທະບຽນຢ່າງໜ້ອຍ 100 ຕື້ກີບ. | 100% | – ຂໍ້ຕົກລົງ ວ່າດ້ວຍບໍລິສັດຄ້ຳປະກັນສິນເຊື່ອ ສະບັບເລກທີ 1179/ທຫລ, ລົງວັນທີ 31 ຕຸລາ 2024. | ທະນາຄານ ແຫ່ງ ສປປ ລາວ |
| 13 | 66121 | - ທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບ:<br>1. ທີ່ປຶກສາທາງດ້ານການເງິນ;<br>2. ນາຍໜ້າ ຊື້ ຂາຍ ຫຼັກຊັບ; | ທຶນຈົດທະບຽນຢ່າງໜ້ອຍ<br>5 ຕື້ກີບ<br>30 ຕື້ກີບ | 90%<br>70% | – ກົດໝາຍ ວ່າດ້ວຍຫຼັກຊັບ ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019; | ທະນາຄານ ແຫ່ງ ສປປ ລາວ |

| | | | | | | |
|---|---|---|---|---|---|---|
| | | 3. ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ. | 100 ຕື້ກີບ | 70% | – ຂໍ້ຕົກລົງ ວ່າດ້ວຍການຂໍອະນຸຍາດດຳເນີນທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບ ສະບັບເລກທີ 22/ຄຄຊ, ລົງວັນທີ 23 ມິຖຸນາ 2021. | |
| 14 | 66111 | - ຕະຫຼາດຫຼັກຊັບ. | ທຶນຈົດທະບຽນຢ່າງໜ້ອຍ 300 ຕື້ກີບ. | 100% | – ກົດໝາຍ ວ່າດ້ວຍຫຼັກຊັບ ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019;<br>– ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຕະຫຼາດຫຼັກຊັບ ສະບັບເລກທີ 30/ຄຄຊ, ລົງວັນທີ 29 ມີນາ 2021. | ທະນາຄານ ແຫ່ງ ສປປ ລາວ |
| 15 | 66199 | - ສູນຮັບຝາກຫຼັກຊັບ. | ທຶນຈົດທະບຽນຢ່າງໜ້ອຍ 50 ຕື້ກີບ. | 100% | - ກົດໝາຍ ວ່າດ້ວຍຫຼັກຊັບ ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019. | ທະນາຄານ ແຫ່ງ ສປປ ລາວ |
| 16 | 66199 | - ການໃຫ້ບໍລິການຊຳລະເງິນ:<br>1. ການໃຫ້ບໍລິການບັດຊຳລະ;<br>2. ການໃຫ້ບໍລິການເງິນເອເລັກໂຕຣນິກ;<br>3. ການໃຫ້ບໍລິການຮັບຊຳລະເງິນທາງເອເລັກໂຕຣນິກ:<br>- ການໃຫ້ບໍລິການແກ່ຜູ້ຮັບຊຳລະ;<br>- ການໃຫ້ບໍລິການສະໜັບສະໜູນການຊຳລະ;<br>- ການໃຫ້ບໍລິການຮັບຊຳລະແທນ.<br>4. ການໃຫ້ບໍລິການໂອນເງິນທາງເອເລັກໂຕຣນິກ. | ທຶນຈົດທະບຽນຢ່າງໜ້ອຍ<br>20 ຕື້ກີບ<br>10 ຕື້ກີບ<br>8 ຕື້ກີບ<br><br>1 ຕື້ກີບ<br>1 ຕື້ກີບ<br><br>1 ຕື້ກີບ | 90% | – ກົດໝາຍ ວ່າດ້ວຍລະບົບການຊຳລະ ສະບັບເລກທີ 45/ສພຊ, ລົງວັນທີ 20 ພະຈິກ 2023;<br>– ຂໍ້ຕົກລົງ ວ່າດ້ວຍການໃຫ້ບໍລິການຊຳລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020. | ທະນາຄານ ແຫ່ງ ສປປ ລາວ |
| 17 | 66199 | - ລະບົບການຊຳລະເງິນທົ່ວໄປ:<br>1. ລະບົບໂອນເງິນທຸລະກຳຍ່ອຍລະຫວ່າງສະມາຊິກ;<br>2. ລະບົບເຄືອຂ່າຍບັດ;<br>3. ລະບົບຫັກບັນຊີ. | ທຶນຈົດທະບຽນຢ່າງໜ້ອຍ<br>10 ຕື້ກີບ<br><br>10 ຕື້ກີບ<br>4 ຕື້ກີບ | 90% | - ກົດໝາຍ ວ່າດ້ວຍລະບົບການຊຳລະ ສະບັບປັບປຸງ ເລກທີ 45/ສພຊ, ລົງວັນທີ 20 ພະຈິກ 2023;<br>- ຂໍ້ຕົກລົງ ວ່າດ້ວຍການໃຫ້ບໍລິການຊຳລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020. | ທະນາຄານ ແຫ່ງ ສປປ ລາວ |

| | | | | | | |
|---|---|---|---|---|---|---|
| 18 | | - ກິດຈະການ ຊື້ - ຂາຍເງິນຄຣິບໂຕ | ທຶນຈົດທະບຽນຢ່າງໜ້ອຍ 10 ລ້ານ ໂດລາສະຫະລັດ. | 49% | – ຂໍ້ຕົກລົງ ວ່າດ້ວຍການທົດລອງທຸລະກຳຊັບສິນດິຈິຕອນ ສະບັບເລກທີ 888/ກຕສ, ລົງວັນທີ 9 ພະຈິກ 2021;<br>– ຂໍ້ຕົກລົງ ວ່າດ້ວຍການທົດລອງດຳເນີນກິດຈະການ ຊື້ ຂາຍ ເງິນຄຣິບໂຕ ສະບັບເລກທີ 777/ທຫລ, ລົງວັນທີ 13 ທັນວາ 2021. | ທະນາຄານ ແຫ່ງ ສປປ ລາວ |
| 19 | 66302 | - ບໍລິສັດບໍລິຫານໜີ້ ແລະ ຊັບສິນ. | ທຶນຈົດທະບຽນຢ່າງໜ້ອຍ 100 ຕື້ກີບ. | 100% | - ຂໍ້ຕົກລົງ ວ່າດ້ວຍບໍລິສັດບໍລິຫານໜີ້ ແລະ ຊັບສິນ ສະບັບເລກທີ 323/ທຫລ,ລົງວັນທີ 7 ເມສາ 2023. | ທະນາຄານ ແຫ່ງ ສປປ ລາວ |
| 20 | 66309 | 1.ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ<br>- ບໍລິສັດຫຼັກຊັບ, ທະນາ ຄານທຸລະກິດບໍລິສັດປະກັນໄພ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ສາມາດຖືຮຸ້ນໄດ້;<br>- ບຸກຄົນ ຫຼື ນິຕິບຸກຄົນ ທີ່ບໍ່ແມ່ນບໍລິສັດຫຼັກຊັບ, ທະນາຄານທຸລະກິດ;<br>- ບໍລິສັດປະກັນໄພ ແລະ ບໍລິ ສັດບໍລິຫານກອງທຶນເພື່ອການລົງທຶນ ພາຍໃນ ແລະ ຕ່າງປະເທດ; | ທຶນຈົດທະບຽນຢ່າງໜ້ອຍ 10 ຕື້ກີບ. | 30%<br><br>49%. | - ກົດໝາຍ ວ່າດ້ວຍຫຼັກຊັບ ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;<br>– ຂໍ້ຕົກລົງ ວ່າດ້ວຍການຂໍອະນຸຍາດດຳເນີນທຸລະກິດຂອງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ສະບັບເລກທີ 04/ຄຄຊ, ລົງວັນທີ 25 ມັງກອນ 2023. | ທະນາຄານ ແຫ່ງ ສປປ ລາວ |
| 21 | 66199 | - ການໃຫ້ບໍລິການຊໍາລະເງິນ:<br>1. ການໃຫ້ບໍລິການບັດຊໍາລະ;<br>2. ການໃຫ້ບໍລິການເງິນເອເລັກໂຕຣນິກ;<br>3. ການໃຫ້ບໍລິການຮັບຊໍາລະເງິນທາງເອເລັກໂຕຣນິກ:<br>- ການໃຫ້ບໍລິການແກ່ຜູ້ຮັບຊໍາລະ; | ທຶນຈົດທະບຽນຢ່າງໜ້ອຍ<br>20 ຕື້ກີບ<br>10 ຕື້ກີບ<br><br>8 ຕື້ກີບ<br>1 ຕື້ກີບ<br>1 ຕື້ກີບ | 90% | – ກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 7 ກໍລະກົດ 2022;<br>– ຂໍ້ຕົກລົງ ວ່າດ້ວຍການດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກຄໍາ ທີ່ສາກົນນໍາໃຊ້ເປັນເຄື່ອງມືຊໍາລະລະຫວ່າງປະເທດ ສະບັບເລກທີ 461/ທຫລ, ລົງວັນທີ 3 ມິຖຸນາ 2019. | ທະນາຄານ ແຫ່ງ ສປປ ລາວ |

| | | | | | | |
|---|---|---|---|---|---|---|
| | | - ການໃຫ້ບໍລິການສະໜັບສະໜູນການຊຳລະ;<br>- ການໃຫ້ບໍລິການຮັບຊຳລະແທນ.<br>4. ການໃຫ້ບໍລິການໂອນເງິນທາງເອເລັກໂຕຣນິກ. | 1 ຕື້ກີບ | | | |
| | | - ລະບົບການຊຳລະເງິນທົ່ວໄປ:<br>1. ລະບົບໂອນເງິນທຸລະກຳຍ່ອຍລະຫວ່າງສະມາຊິກ;<br>2. ລະບົບເຄືອຂ່າຍບັດ;<br>3. ລະບົບຫັກບັນຊີ. | ທຶນຈົດທະບຽນຢ່າງໜ້ອຍ 10 ຕື້ກີບ<br>10 ຕື້ກີບ<br>4 ຕື້ກີບ | 90% | – ກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023;<br>– ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ ສະບັບເລກທີ 42/ທຫລ, ລົງວັນທີ 15 ມັງກອນ 2016. | ທະນາຄານ ແຫ່ງ ສປປ ລາວ |
| 22 | 6494 | ການດຳເນີນກິດຈະການຊື້ຂາຍເງິນຄຣິບໂຕ | ທຶນຈົດທະບຽນຢ່າງໜ້ອຍ 10 ລ້ານ ໂດລາສະຫະລັດ. | 49% | – ກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023;<br>– ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ ສະບັບເລກທີ 42/ທຫລ, ລົງວັນທີ 15 ມັງກອນ 2016.<br>– ດຳລັດ ວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 184/ລບ, ລົງວັນທີ 20 ມິຖຸນາ 2022. | |
| 23 | 66302 | ບໍລິການບໍລິຫານໜີ້ ແລະ ຊັບສິນ. | ທຶນຈົດທະບຽນຢ່າງໜ້ອຍ 100 ຕື້ກີບກີບ. | 100% | – ຂໍ້ຕົກລົງ ວ່າດ້ວຍບໍລິສັດບໍລິຫານໜີ້ ແລະ ຊັບສິນ ສະບັບເລກທີ 323/ທຫລ, ລົງວັນທີ 7 ເມສາ 2023. | |
| **ຂະແໜງ ສາທາລະນະສຸກ** | | | | | | |

| | | | | | | |
|---|---|---|---|---|---|---|
| 24 | 86100 | ກິດຈະການໂຮງໝໍເອກະຊົນ | 2 ຕື້ກີບຂຶ້ນໄປ | 100% | - ກົດໝາຍ ວ່າດ້ວຍການປິ່ນປົວ ສະບັບເລກທີ 48/ ສພຊ, ລົງວັນທີ 20 ພະຈິກ 2023;<br>- ດຳລັດ ວ່າດ້ວຍໂຮງໝໍເອກະຊົນ ສະ ບັບເລກທີ 151/ລບ, ລົງວັນທີ 28 ເມສາ 2014. | ກະຊວງ ສາທາລະນະສຸກ |
| **ຂະແໜງການເງິນ** | | | | | | |
| 25 | 52102 | ກິດຈະການ ກ່ຽວກັບການບໍລິການລະບົບ ສາງພາສີ | | 49% | - ກົດໝາຍ ວ່າດວ້ຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;<br>- ກົດໝາຍ ວ່າດວ້ຍການບັນຊີ ສະບັບເລກທີ47/ ສພຊ, ລົງວັນທີ 26 ທັນວາ 2013; | ກະຊວງການເງິນ |
| **ຂະແໜງສຶກສາທິການ ແລະ ກິລາ** | | | | | | |
| 26 | 85101 | ການສຶກສາກ່ອນໄວຮຽນ (ໂຮງຮຽນລ້ຽງເດັກ (ຫລັກສູດພາຍໃນ ແລະ ຫລັກສູດນານາຊາດ), ໂຮງຮຽນອານຸບານ (ຫລັກ ສູດພາຍໃນ ແລະ ຫລັກສູດນານາຊາດ) | ທຶນຈົດທະບຽນ 500 ລ້ານກີບຂຶ້ນໄປ | 100% | –ກົດໝາຍ ວ່າດ້ວຍການສຶກສາ ສະບັບເລກທີ 69/ ສພຊ, ລົງວັນທີ 11 ທັນວາ 2024;<br>–ດຳລັດ ວ່າດ້ວຍການສຶກສາກ່ອນໄວຮຽນ ສະບັບ ເລກທີ 391/ລບ, ລົງວັນທີ 4 ກັນຍາ 2024;<br>–ດຳລັດ ວ່າດ້ວຍການສຶກສາພາກເອກະຊົນ ສະບັບ ເລກທີ 332/ລບ, ລົງວັນທີ 19 ກໍລະກົດ 2024. | ກະຊວງສຶກສາທິ ການ ແລະ ກິລາ |
| 27 | 85102 | ການສຶກສາຊັ້ນປະຖົມສຶກສາ (ຫລັກສູດພາຍ ໃນ ແລະ ຫລັກສູດນານາຊາດ) | | | | |
| 28 | 85211 | ການສຶກສາຊັ້ນມັດທະຍົມຕອນຕົ້ນ (ຫລັກສູດ ພາຍໃນ ແລະ ຫລັກສູດນານາຊາດ) | ທຶນຈົດທະບຽນ 500 ລ້ານກີບຂຶ້ນໄປ | | | |
| 29 | 85212 | ການສຶກສາຊັ້ນມັດທະຍົມຕອນປາຍ (ຫລັກສູດພາຍໃນ ແລະ ຫລັກສູດນານາຊາດ) | | | | |

| | | | | | | |
|---|---|---|---|---|---|---|
| 30 | 85429 | ການສຶກສາທາງດ້ານວັດທະນະທຳອື່ນໆ | ທຶນຈົດທະບຽນ 500 ລ້ານກີບຂຶ້ນໄປ | | – ກົດໝາຍ ວ່າດ້ວຍການສຶກສາ ສະບັບເລກທີ 69/ສພຊ, ລົງວັນທີ 11 ທັນວາ 2024;<br>– ກົດໝາຍ ວ່າດ້ວຍກິລາ-ກາຍຍະກຳ ສະບັບເລກທີ 15/ສພຊ, ລົງວັນທີ74/ສພຊ, ລົງວັນທີ 25 ພະຈິກ 2019;<br>– ກົດໝາຍ ວ່າດ້ວຍສິລະປະການສະແດງ ສະບັບເລກທີ 16/ສພຊ, ລົງວັນທີ 4 ພຶດສະພາ 2017;<br>–ດຳລັດ ວ່າດ້ວຍການສຶກສາພາກເອກະຊົນ ສະບັບເລກທີ 332/ລບ, ລົງວັນທີ 19 ກໍລະກົດ 2024. | |
| 31 | 85492 | ການສອນພາສາຕ່າງປະເທດ | | | – ກົດໝາຍ ວ່າດ້ວຍການສຶກສາ ສະບັບເລກທີ 69/ສພຊ, ລົງວັນທີ 11 ທັນວາ 2024;<br>– ກົດໝາຍ ວ່າດ້ວຍອາຊີວະສຶກສາ ສະບັບເລກທີ 63/ສພຊ, ລົງວັນທີ 12 ມິຖຸນາ 2019;<br>–ດຳລັດ ວ່າດ້ວຍການສຶກສາພາກເອກະຊົນ ສະບັບເລກທີ 332/ລບ, ລົງວັນທີ 19 ກໍລະກົດ 2024. | ກະຊວງສຶກສາທິການ ແລະ ກິລາ |
| 32 | 85494 | ຝຶກອົບຮົມການບັນຊີ | ທຶນຈົດທະບຽນ 500 ລ້ານກີບຂຶ້ນໄປ | | | |
| 33 | 85500 | ການບໍລິການທີ່ເປັນການສົ່ງເສີມການສຶກສາ | | | | |

**ໝາຍເຫດ:** ບັນຊີປະເພດທຸລະກິດນີ້ເງື່ອນໄຂສຳລັບນັກລົງທຶນຕ່າງປະເທດແມ່ນ ໄດ້ຄົ້ນຄວ້າ ແລະ ສັງລວມມາຈາກຄຳສະເໜີຂອງບັນດາຂະແໜງການທີ່ກ່ຽວຂ້ອງ, ປ່ຽນແທນ ແລະ ລົບລ້າງ ບັນຊີ ໆ ຕາມແຈ້ງການ ສະບັບເລກທີ 1327/ອຄ.ທຄວ, ລົງວັນທີ 13 ກໍລະກົດ 2015.